**Ascension Wisconsin**

Ascension SE Wisconsin Hospital – St Joseph Campus, Ascension SE Wisconsin Hospital – Elmbrook Campus, Ascension All Saints Hospital, Ascension SE Wisconsin Hospital – Franklin Campus, Ascension St. Francis Hospital and Midwest Orthopedic Specialty Hospital, LLC, Columbia St. Mary's Hospital Milwaukee, St. Mary's Hospital Ozaukee, Sacred Heart Rehabilitation Institute, Howard Young Medical Center, Ascension Eagle River Hospital, Ascension Good Samaritan Hospital, Ascension Medical Group, Ascension Our Lady of Victory Hospital, Ascension Sacred Heart Hospital, Ascension St Mary's Hospital, Ascension St Michael's Hospital, ແລະ Affinity Health System ທີ່ລວມມີ ກຸ່ມທາງການແພດ Ascension, Ascension Calumet Hospital, Ascension NE Wisconsin Mercy Hospital, ແລະ Ascension NE Wisconsin St. Elizabeth Hospital.

## <u>ສັງລວມນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ</u>

Ascension Wisconsin, ລວມທັງບັນດາກະຊວງສາທາລະນະສຸກທີ່ລະບຸຢູ່ຂ້າງເທິງ, ມີຄວາມມຸ້ງໝັ້ນ ແລະເຄົາລົບກຽດສັກສີຂອງແຕ່ລະຄົນໂດຍມີຄວາມກັງວົນເປັນພິເສດຕໍ່ຜູ້ທີ່ຕໍ່ສູ້ກັບອຸປະສັກໃນການເຂົ້າເຖິງການບໍລິການດ້ານສຸຂະພາບ. Ascension Wisconsin ມີຄວາມມຸ້ງໝັ້ນທີ່ເທົ່າທຽມກັນໃນການຄຸ້ມຄອງຊັບພະຍາກອນສຸຂະພາບຂອງຕົນເປັນການບໍລິການໃຫ້ແກ່ຊຸມຊົນທັງໝົດ. ໂດຍອີງໃສ່ຫຼັກການເຫຼົ່ານີ້, Ascension Wisconsin ໃຫ້ການຊ່ວຍເຫຼືອດ້ານການເງິນສໍາລັບບຸກຄົນທີ່ໄດ້ຮັບການສຸກເສີນ ຫຼື ການດູແລທີ່ຈໍາເປັນທາງການແພດອື່ນໆຈາກ Ascension Wisconsin. ບົດສະຫຼຸບນີ້ສະເໜີໂດຍຫຍໍ້ກ່ຽວກັບນະໂຍບາຍການຊ່ວຍເຫຼືອດ້ານການເງິນຂອງ Ascension Wisconsin.

## <u>ໃຜເປັນຜູ້ມີສິດໄດ້ຮັບ?</u>

ທ່ານອາດຈະໄດ້ຮັບການຊ່ວຍເຫຼືອດ້ານການເງິນຖ້າທ່ານອາໄສຢູ່ໃນເຂດເທດສະບານໃດໜຶ່ງໃນ Wisconsin ທີ່ມີສະຖານທ
ຫຼື ຄລີນິກ Ascension WI ລວມທັງແຕ່ບໍ່ຈໍາກັດສະຖານທີ່ຢູ່ໃນ Outagamie, Winnebago, Calumet, Marathon, Portage, Lincoln, Oneida, Vilas, Clark, Milwaukee, Waukesha, Ozaukee, Washington, Racine, Kenosha ແລະ ເມືອງ Jefferson.
ໂດຍທົ່ວໄປແລ້ວການຊ່ວຍເຫຼືອທາງດ້ານການເງິນແມ່ນໄດ້ກໍານົດໂດຍລາຍຮັບຄົວເຮືອນທັງຫມົດຂອງທ່ານເມື່ອທຽບກັບລະດັບຄວາມທຸກຍາກຂອງລັດຖະບານກາງ. ຖ້າລາຍໄດ້ຂອງທ່ານຕໍ່າກ່ວາ ຫຼື ເທົ່າກັບ 250% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບການດູແລຈາກການກຸສົນ 100% ໃນສ່ວນຂອງຄ່າບໍລິການທີ່ທ່ານຮັບຜິດຊອບ. ຖ້າຫາກວ່າລາຍຮັບຂອງທ່ານສູງກວ່າ 250 % ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ ແຕ່ບໍ່ເກີນ 400% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບອັດຕາສ່ວນຫຼຸດລາຄາຢູ່ໃນລະດັບການຫຼຸດຄ່າບໍລິການ.
ຖ້າທ່ານມີໜີ້ສິນທາງການແພດສໍາລັບການດູແລສຸກເສີນ ແລະ ຄວາມຈໍາເປັນທາງການແພດທີ່ເກີນຈໍານວນລາຍໄດ້ຂອງທ່ານ, ທ່ານອາດຈະມີສິດໄດ້ຮັບສ່ວນຫຼຸດ.
ຖ້າທ່ານມີຊັບສິນເກີນ250% ຂອງຈໍານວນລາຍໄດ້ຈາກລະດັບຄວາມທຸກຍາກຂອງລັດຖະບານກາງຂອງທ່ານ ທ່ານອາດຈະບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນ.
ຄົນເຈັບຜູ້ທີ່ມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນຈະບໍ່ຖືກເກັບຄ່າເພີ່ມສໍາລັບການເບິ່ງແຍງດູແລທີ່ມີສິດໄດ້ຮັບຫຼາຍກ່ວາຈໍານວນທີ່ໄດ້ສົ່ງບິນເກັບເງິນໂດຍທົ່ວໄປກັບຄົນເຈັບທີ່ມີຄຸ້ມຄອງປະກັນໄພ.

## <u>ການບໍລິການໃດແດ່ໄດ້ຮັບການຄຸ້ມຄອງ?</u>

ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນໄດ້ນໍາໃຊ້ກັບການເບິ່ງແຍງດູແລສຸກເສີນ ແລະ ການເບິ່ງແຍງດູແລທີ່ຈໍາເປັນທາງການແພດອື່ນໆ.

ຂໍ້ກຳນົດເຫຼົ່ານີ້ແມ່ນໄດ້ກຳນົດໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ.
ການດູແລອື່ນໆທັງໝົດບໍ່ໄດ້ຖືກຄຸ້ມຄອງໂດຍນະໂຍບາຍການຊ່ວຍເຫຼືອດ້ານການເງິນ.

## ຂ້າພະເຈົ້າສາມາດສະໝັກຂໍໄດ້ແນວໃດ?

ເພື່ອສະໝັກຂໍການຊ່ວຍເຫຼືອດ້ານການເງິນ, ທ່ານຈະປະກອບໃບສະໝັກເປັນລາຍລັກອັກສອນ ແລະ ໃຫ້ເອກະສານສະໜັບສະໜູນ, ດັ່ງທີ່ໄດ້ອະທິບາຍໄວ້ໃນນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ໃບສະໝັກນະໂຍບາຍການຊ່ວຍເຫຼືອດ້ານການເງິນ. ປະກອບໃບສະໝັກທີ່ຂຽນເປັນລາຍລັກອັກສອນ ແລະ ໃຫ້ເອກະສານສະໜັບສະໜູນທີ່ຈຳເປັນທັງໝົດພາຍໃນ 240 ວັນນັບຈາກມື້ທຳອິດບັນຊີຂອງທ່ານ. ໃບສະໝັກຂອງທ່ານຈະຖືກກວດກາຄືນສຳລັບການມີສິດໄດ້ຮັບໃນໂຄງການຊ່ວຍເຫຼືອດ້ານການເງິນ ແລະ ສຳລັບຜູ້ຈ່າຍເງິນພາກສ່ວນທີສາມ ຫຼື ໂຄງການຊ່ວຍເຫຼືອ. ຫຼັງຈາກທີ່ພວກເຮົາໄດ້ຮັບໃບສະໝັກ ແລະ ເອກະສານສະໜັບສະໜູນຂອງທ່ານ, ພວກເຮົາຈະແຈ້ງເປັນລາຍລັກອັກສອນວ່າທ່ານມີຄຸນສົມບັດສຳລັບໂຄງການ ຫຼື ບໍ່.

## ຂ້າພະເຈົ້າສາມາດຮັບການຊ່ວຍເຫຼືອກັບໃນການສະໝັກໄດ້ແນວໃດ?

ສຳລັບການຊ່ວຍເຫຼືອໃນການນຳໃຊ້ນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ທ່ານສາມາດຂໍນັດພົບກັບຜູ້ແນະນຳດ້ານການເງິນທີ່ສະຖານທີ່ຂອງ Ascension WI, ຫຼື ຕິດຕໍ່ຜູ້ແນະນຳດ້ານການເງິນທີ່ [414-585-1097].

## ຂ້າພະເຈົ້າສາມາດຂໍຂໍ້ມູນເພີ່ມເຕີມແນວໃດ?

ສຳເນົາເອກະສານນະໂຍບາຍການຊ່ວຍເຫຼືອ ແລະ ແບບຟອມໃບສະໝັກການຊ່ວຍເຫຼືອດ້ານການເງິນທີ່ມີໃຫ້ຢູ່ທີ່ *https://healthcare.ascension.org/Financial-Assistance/Wisconsin* ແລະ ຢູ່ພະແນກຂໍ້ມູນຂ່າວສານ, ການລົງທະບຽນ ແລະ ພະແນກສຸກເສີນທີ່ສະຖານທີ່ຫ້ອງການຂອງ Ascension WI ໃດໜຶ່ງ.
ສຳເນົານະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ໃບສະໝັກການຊ່ວຍເຫຼືອດ້ານການເງິນໂດຍບໍ່ເສຍຄ່າໂດຍສາມາດໄດ້ຮັບທາງໄປສະນີໂດຍການສົ່ງຄຳຮ້ອງຂໍໄປທີ່ຜູ້ແນະນຳດ້ານການເງິນ, ຫ້ອງການບໍລິການບໍລິສັດວິສາຫະກິດຂອງ Ascension WI, 801 S. 60th St., Suite 150, West Allis, WI 53214
ຫຼື ທາງອີເມວ [financialcounselor@r1rcm.com].
ຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍການຊ່ວຍເຫຼືອດ້ານການເງິນຍັງສາມາດມີໃຫ້ໂດຍທາງໂທລະສັບທີ່ [414-527-5464

## ຈະເປັນແນວໃດຖ້າຫາກວ່າຂ້າພະເຈົ້າບໍ່ມີສິດໄດ້ຮັບ?

ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນພາຍໃຕ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອປະເພດອື່ນ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ຫາຜູ້ແນະນຳດ້ານການເງິນທີ່ສະຖານທີ່ຂອງ Ascension WI ໃດໜຶ່ງ, ໂດຍທາງອີເມວ [financialcounselor@r1rcm.com],
ຫຼື ທາງໂທລະສັບ [414-585-1097].

**ການແປຄຳອະທິບາຍກ່ຽວກັບນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ໃບສະໝັກນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ບົດແນະນຳ, ແລະ ບົດສະຫຼຸບພາສາທຳມະດານີ້ ແມ່ນມີໃຫ້ເປັນພາສາຕໍ່ໄປນີ້ໃນເວັບໄຊທ໌ຂອງພວກເຮົາ ແລະ ຕາມການຮ້ອງຂໍ:**

ພາສາສະເປນ, ພາສາມົ້ງ, ພາສາອາຣັບ, ພາສາຈີນກວາງຕຸ້ງ, ພາສາຣັດເຊຍ, ພາສາເຊີເບຍ-ໂຄຼເອຊຽນ ແລະ ພາສາລາວ